ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

---

ເລກທີ 06/94

# ກົດໝາຍ
# ວ່າດ້ວຍການລົ້ມລະລາຍຂອງວິສາຫະກິດ

## ໝວດທີ I
## ບົດບັນຍັດທົ່ວໄປ

ມາດຕາ 1. ຈຸດປະສົງຂອງກົດໝາຍວ່າດວ້ຍການລົ້ມລະລາຍ

ກົດໝາຍວ່າດ້ວຍການລົ້ມລະລາຍຂອງວິສາຫະກິດ ແມ່ນແນໃສ່ແກ້ໄຂວິສາຫະກິດທີ່ຢູ່ໃນສະພາວະລົ້ມລະລາຍ ເພື່ອປົກປ້ອງຜົນປະໂຫຍດຂອງລັດ, ຂອງເຈົ້າໜີ້, ຂອງວິສາຫະກິດລູກໜີ້, ການໃຫ້ກູ້ຢືມສິນເຊື່ອ, ປົກປັກຮັກສາຄວາມເປັນລະບຽບຂອງການດຳເນີນທຸລະກິດ, ສົ່ງເສີມການລົງທຶນ ແລະປະກອບສ່ວນເຂົ້າໃນການພັດທະນາເສດຖະກິດສັງຄົມ.

ມາດຕາ 2. ວິສາຫະກິດທີ່ຢູ່ໃນສະພາວະລົ້ມລະລາຍ

ວິສາຫະກິດທີ່ຢູ່ໃນສະພາວະລົ້ມລະລາຍ ແມ່ນວິສາຫະກິດທີ່ພວມປະສົບກັບຄວາມຫຍຸ້ງຍາກ ຫລື ຖືກຫລຸບທຶນໃນການເຄື່ອນໄຫວທຸລະກິດ ພາຍຫລັງທີ່ໄດ້ນຳໃຊ້ບັນດາວິທີການດ້ານການເງິນອັນຈຳເປັນ ແລ້ວ ແຕ່ກໍຍັງບໍ່ສາມາດຊຳລະໜີ້ສິນໄດ້ຕາມກຳນົດເວລາ.

ມາດຕາ 3. ຂອບເຂດການນຳໃຊ້ກົດໝາຍ

ກົດໝາຍສະບັບນີ້ນຳໃຊ້ສຳລັບທຸກວິສາຫະກິດ ທີ່ຢູ່ໃນສະພາວະລົ້ມລະລາຍ ຊຶ່ງມີທີ່ຕັ້ງຫລືປະກອບ ທຸລະກິດຢູ່ສາທາລະນະລັດປະຊາທິປະໄຕປະຊາຊົນລາວ ບໍ່ວ່າຈະເຄື່ອນໄຫວດ້ວຍຕົນເອງຫລືດ້ວຍຕົວ ແທນກໍຕາມ.

ມາດຕາ 4. ສິດໃນການຮ້ອງຟ້ອງ ຫລືຮ້ອງຂໍໃຫ້ລົ້ມລະລາຍ

ເມື່ອວິສາຫະກິດໃດໜຶ່ງຫາກຢູ່ໃນສະພາວະລົ້ມລະລາຍ ເຈົ້າໜີ້ມີສິດຮ້ອງຟ້ອງ ຫລືວິສາຫະ

ກິດ ເອງມີສິດ ຮ້ອງຂໍໃຫ້ສານພິຈາລະນາຕັດສິນການລົ້ມລະລາຍ.

## ໝວດທີ II
## ການຮ້ອງຟ້ອງ ຫລືການຮ້ອງຂໍໃຫ້ລົ້ມລະລາຍ

ມາດຕາ 5. ເງື່ອນໄຂການຮ້ອງຟ້ອງ ຫລືການຮ້ອງຂໍໃຫ້ລົ້ມລະລາຍ

ການຮ້ອງຟ້ອງຫລືການຮ້ອງຂໍໃຫ້ສານພິຈາລະນາຕັດສິນການລົ້ມລະລາຍຂອງວິສາຫະກິດຈະປະຕິບັດໄດ້ກໍຕໍ່ເມື່ອວິສາຫະກິດນັ້ນຫາກມີໜີ້ສິນຈົນເກີນຄວາມສາມາດຊໍາລະໄດ້ ຫລືເຈົ້າໜີ້ຫາກໄດ້ສົ່ງໃບທວງໜີ້ໃຫ້ວິສາຫະກິດລູກໜີ້ແລ້ວຢ່າງໜ້ອຍສາມຄັ້ງ ຊຶ່ງແຕ່ລະຄັ້ງຫ່າງກັນບໍ່ໃຫ້ຫລຸດ 20 ວັນ ແລະວິສາຫະກິດລູກໜີ້ກໍໄດ້ເຊັນຮັບເອົາແລ້ວ ແຕ່ຫາກບໍ່ໄດ້ຊໍາລະໜີ້ສິນ.

ໃນກໍລະນີວິສາຫະກິດ ຫາກເຫັນວ່າຕົນເອງພົບຄວາມຫຍຸ້ງຍາກ ຊຶ່ງຄາດຄະເນວ່າຈະບໍ່ສາມາດຊໍາລະໜີ້ສິນໄດ້ ກໍສາມາດຮ້ອງຂໍໃຫ້ສານພິຈາລະນາຕັດສິນການລົ້ມລະລາຍວິສາຫະກິດຂອງຕົນ.

ມາດຕາ 6. ສໍານວນຄໍາຮ້ອງຟ້ອງຂອງເຈົ້າໜີ້

ສໍານວນຄໍາຮ້ອງຟ້ອງຂອງເຈົ້າໜີ້ຕໍ່ສານ ປະກອບດ້ວຍ:

1. ໃບຄໍາຮ້ອງ ຊຶ່ງໃນນັ້ນໃຫ້ບອກຊື່,ນາມສະກຸນ ແລະທີ່ຢູ່ຂອງເຈົ້າຂອງຄໍາຮ້ອງ, ຊື່ ແລະ ທີ່ຕັ້ງຂອງວິສາຫະກິດທີ່ຖືກຟ້ອງໃຫ້ພິຈາລະນາຕັດສິນການລົ້ມລະລາຍ;

2. ໃບທວງໜີ້ ແລະໃບຢັ້ງຢືນໜີ້ສິນທີ່ວິສາຫະກິດດັ່ງກ່າວ ບໍ່ຊໍາລະໄດ້ຕາມກໍານົດ.

ຜູ້ຮ້ອງຟ້ອງໃຫ້ສານພິຈາລະນາຕັດສິນການລົ້ມລະລາຍຂອງວິສາຫະກິດ ຕ້ອງຈ່າຍເງິນຄ່າທໍານຽມສານຕາມກົດໝາຍວ່າດ້ວຍຄ່າທໍານຽມສານ.

ມາດຕາ 7. ສໍານວນຄໍາຮ້ອງຂໍຂອງວິສາຫະກິດ

ສໍານວນຄໍາຮ້ອງຂໍຂອງວິສາຫະກິດຕໍ່ສານ ປະກອບດ້ວຍ:

1. ໃບຄໍາຮ້ອງ ຊຶ່ງໃນນັ້ນໃຫ້ບອກ ຊື່ ແລະທີ່ຕັ້ງຂອງວິສາຫະກິດ, ຊື່ ແລະນາມສະກຸນຂອງ ເຈົ້າຂອງວິສາຫະກິດ ຫລືຜູ້ຕາງໜ້າຂອງວິສາຫະກິດ;

2. ເອກະສານຢັ້ງຢືນ ການນໍາໃຊ້ວິທີການຕ່າງໆ ເພື່ອແກ້ໄຂຂໍ້ຫຍຸ້ງຍາກຂອງວິສາຫະກິດໃນໄລຍະຜ່ານມາ ;

3. ບົດບັນທຶກກອງປະຊຸມໃຫຍ່ຂອງວິສາຫະກິດ ກ່ຽວກັບການຕົກລົງເຫັນດີ ໃຫ້ຮ້ອງຂໍຕໍ່ສານພິຈາລະນາຕັດສິນການລົ້ມລະລາຍຂອງວິສາຫະກິດ. ສໍາລັບວິສາຫະກິດບຸກຄົນ ແລະບໍລິສັດຈໍາກັດຜູ້ດຽວ ບໍ່ຈໍາເປັນມີບົດບັນທຶກດັ່ງກ່າວ;

4. ບັນຊີລາຍຊື່ເຈົ້າໜີ້ ພ້ອມດ້ວຍຈໍານວນໜີ້, ໃບສະຫລຸບຊັບສິນບັດ ແລະບົດສະຫລຸບການເຄື່ອນໄຫວປະຈໍາປີຂອງວິສາຫະກິດສອງປີສຸດທ້າຍ. ຖ້າວ່າວິສາຫະກິດຫາກເຄື່ອນໄຫວຍັງບໍ່ທັນ

ຮອດສອງປີ ກໍໃຫ້ມີໃບສະຫລຸບຊັບສິນບັດ ແລະບົດສະຫລຸບການເຄື່ອນໄຫວຂອງຫມົດໄລຍະການເຄື່ອນໄຫວຂອງວິສາຫະກິດ.

ຜູ້ຮ້ອງຂໍໃຫ້ສານພິຈາລະນາຕັດສິນການລົ້ມລະລາຍຂອງວິສາຫະກິດຕົນ ຕ້ອງຈ່າຍເງິນຄ່າທໍານຽມສານຕາມກົດຫມາຍວ່າດ້ວຍຄ່າທໍານຽມສານ.

ມາດຕາ 8. ການຮັບເອົາຄໍາຮ້ອງຟ້ອງ ຫລືຄໍາຮ້ອງຂໍ

ສານຈະຮັບເອົາຄໍາຮ້ອງຟ້ອງ ໃຫ້ພິຈາລະນາຕັດສິນການລົ້ມລະລາຍຂອງວິສາຫະກິດໄດ້ກໍຕໍ່ເມື່ອຜູ້ຮ້ອງຟ້ອງນັ້ນຫາກເປັນເຈົ້າຫນີ້ ຫລື ຜູ້ທີ່ໄດ້ຮັບມອບສິດຈາກເຈົ້າຫນີ້ຢ່າງເປັນລາຍລັກອັກສອນ ແລະສໍານວນຄໍາຮ້ອງຟ້ອງຕ້ອງໃຫ້ຖືກຕ້ອງຕາມທີ່ໄດ້ກໍານົດໃວ້ໃນມາດຕາ 6 ຂອງກົດຫມາຍສະບັບນີ້. ສໍາລັບຄໍາຮ້ອງຂໍຂອງວິສາຫະກິດນັ້ນໃຫ້ປະຕິບັດຕາມມາດຕາ 7 ຂອງກົດຫມາຍສະບັບນີ້.

ມາດຕາ 9. ຄວາມຮັບຜິດຊອບຂອງຜູ້ຮ້ອງຟ້ອງ

ໃນກໍລະນີຄໍາຮ້ອງຟ້ອງໃຫ້ສານພິຈາລະນາຕັດສິນການລົ້ມລະລາຍຂອງວິສາຫະກິດ ຫາກບໍ່ມີເຫດຜົນພຽງພໍ ແລະ ມີຈຸດປະສົງແນໃສ່ເຮັດໃຫ້ຜູ້ຖືກຟ້ອງໄດ້ຮັບຄວາມເສັຍຫາຍ ຜູ້ຮ້ອງຟ້ອງນັ້ນຈະຖືກດໍາເນີນຄະດີຕາມກົດຫມາຍ.

ມາດຕາ 10. ກໍານົດເວລາພິຈາລະນາຄໍາຮ້ອງຟ້ອງ ຫລືຄໍາຮ້ອງຂໍ

ພາຍໃນກໍານົດ 7 ວັນ ນັບແຕ່ວັນທີ່ສານໄດ້ຮັບຄໍາຮ້ອງຟ້ອງເປັນຕົ້ນໄປ ສານຕ້ອງແຈ້ງກ່ຽວກັບການຕົກລົງຂອງຕົນໃຫ້ຜູ້ຮ້ອງຟ້ອງຊາບ. ຖ້າວ່າສານຫາກຕົກລົງຮັບເອົາຄໍາຮ້ອງຟ້ອງ ເພື່ອພິຈາລະນາ, ສານກໍຕ້ອງແຈ້ງເປັນລາຍລັກອັກສອນໃຫ້ວິສາຫະກິດທີ່ຖືກຟ້ອງຊາບ ພ້ອມທັງສົ່ງສໍາເນົາຄໍາຮ້ອງຟ້ອງຄັດຕິດໄປພ້ອມ.

ພາຍໃນກໍານົດ 15 ວັນ ນັບແຕ່ວັນໄດ້ຮັບໃບແຈ້ງການຂອງສານ ເປັນຕົ້ນໄປວິສາຫະກິດ ທີ່ຖືກຟ້ອງນັ້ນຕ້ອງສົ່ງບົດສະຫລຸບລາຍງານຢັ້ງຢືນຄວາມອາດສາມາດການຊໍາລະຫນີ້ສິນໃຫ້ສານ.

ພາຍໃນກໍານົດ 35 ວັນ ນັບແຕ່ວັນທີ່ສານໄດ້ຕົກລົງຮັບເອົາຄໍາຮ້ອງຟ້ອງ ເປັນຕົ້ນໄປສານຕ້ອງເປີດປະຊຸມເພື່ອພິຈາລະນາຄໍາຮ້ອງຟ້ອງນັ້ນ.

ສໍາລັບວິສາຫະກິດທີ່ຮ້ອງຂໍໃຫ້ສານພິຈາລະນາຕັດສິນການລົ້ມລະລາຍຂອງວິສາຫະກິດນັ້ນ ພາຍໃນກໍານົດ 7 ວັນ ນັບແຕ່ວັນທີ່ສານໄດ້ຕົກລົງຮັບເອົາຄໍາຮ້ອງຂໍເປັນຕົ້ນໄປ ສານຕ້ອງແຈ້ງເປັນລາຍລັກອັກສອນ ໃຫ້ບັນດາເຈົ້າຫນີ້ຊາບ ພ້ອມດ້ວຍການກໍານົດວັນ ເວລາ ທີ່ສານຈະເປີດປະຊຸມພິຈາລະນາຄໍາຮ້ອງຂໍນັ້ນ. ກອງປະຊຸມດັ່ງກ່າວຈະຕ້ອງເປີດຂຶ້ນ ພາຍໃນກໍານົດ 35 ວັນ ນັບແຕ່ວັນທີ່ສານໄດ້ຕົກລົງຮັບເອົາຄໍາຮ້ອງຂໍນັ້ນເປັນຕົ້ນໄປ.

## ໝວດທີ III
## ການພິຈາລະນາຄໍາຮ້ອງຟ້ອງ
## ຫລື ຄໍາຮ້ອງຂໍໃຫ້ລົ້ມລະລາຍ

ມາດຕາ 11. ການຍົກເລີກ ຫລືການຮັບເອົາຄໍາຮ້ອງຟ້ອງ ຫລືຮ້ອງຂໍ ເພື່ອພິຈາລະນາ

ໃນການພິຈາລະນາຄະດີລົ້ມລະລາຍ ຕາມການຮ້ອງຟ້ອງຂອງເຈົ້າໜີ້ຫລືຕາມການຮ້ອງຂໍຂອງວິສາຫະກິດເອງນັ້ນ ເມື່ອສານຫາກເຫັນວ່າບໍ່ມີຫລັກຖານຢັ້ງຢືນພຽງພໍກໍໃຫ້ສານຕັດສິນຍົກເລີກຄໍາຮ້ອງຟ້ອງ ຫລືຄໍາຮ້ອງຂໍດັ່ງກ່າວ. ຜູ້ຮ້ອງຟ້ອງ ຫລືຜູ້ຮ້ອງຂໍມີສິດອຸທອນໄດ້ພາຍໃນກໍານົດ 15 ວັນນັບແຕ່ ວັນໄດ້ຊາບຄໍາຕັດສິນຂອງສານເປັນຕົ້ນໄປ.

ມາດຕາ 12. ການໄກ່ເກັ່ຍລະຫວ່າງເຈົ້າໜີ້ ແລະວິສາຫະກິດລູກໜີ້

ວິສາຫະກິດທີ່ຢູ່ໃນສະພາວະລົ້ມລະລາຍ ມີສິດສະເໜີໃຫ້ສານທໍາການໄກ່ເກັ່ຍ ຖ້າສານໄດ້ພິຈາລະນາເຫັນສົມຄວນ ກໍຈະແຕ່ງຕັ້ງຜູ້ໄກ່ເກັ່ຍ ເພື່ອທໍາການໄກ່ເກັ່ຍໃຫ້ມີການໂຍະຍານການຊໍາລະໜີ້ສິນລະຫວ່າງເຈົ້າໜີ້ລາຍໃຫຍ່ ກັບວິສາຫະກິດນັ້ນ.

ການໄກ່ເກັ່ຍຕ້ອງໄດ້ຮັກສາເປັນຄວາມລັບ. ຜູ້ໄກ່ເກັ່ຍມີໜ້າທີ່ໄກ່ເກັ່ຍລະຫວ່າງເຈົ້າໜີ້ ແລະວິສາຫະກິດລູກໜີ້ ເພື່ອເລື່ອນກໍານົດເວລາຊໍາລະໜີ້ສິນຫລືຫລຸດຜ່ອນໜີ້ສິນລົງ ພ້ອມທັງຂໍໃຫ້ໂຈະການຮ້ອງຟ້ອງຕໍ່ສານ.

ມາດຕາ 13. ຜົນຂອງການໄກ່ເກັ່ຍ

ຖ້າວ່າເຈົ້າໜີ້ ແລະວິສາຫະກິດລູກໜີ້ຫາກສາມາດຕົກລົງໄກ່ເກັ່ຍກັນໄດ້ ແລະວິສາຫະກິດລູກ ໜີ້ ກໍສາມາດປະຕິບັດຕາມບົດບັນທຶກຂອງການໄກ່ເກັ່ຍໄດ້ນັ້ນ ວິສາຫະກິດລູກໜີ້ກໍຈະດໍາເນີນກິດຈະ ການຂອງຕົນຕໍ່ໄປ ແລະການຮ້ອງຟ້ອງນັ້ນກໍຈະຕົກໄປ.

ໃນກໍລະນີບໍ່ສາມາດໄກ່ເກັ່ຍກັນໄດ້ ຫລື ບໍ່ສາມາດປະຕິບັດຕາມບົດບັນທຶກຂອງການໄກ່ເກັ່ຍໄດ້ ສານກໍຈະຕົກລົງກໍານົດເວລາໃຫ້ຢຸດການຊໍາລະໜີ້ສິນ,ແຕ່ງຕັ້ງຄະນະສານ ເພື່ອພິຈາລະນາຕັດສິນ ການລົ້ມລະລາຍຂອງວິສາຫະກິດທີ່ຖືກຟ້ອງ ແລະ ແຕ່ງຕັ້ງຄະນະຄວບຄຸມຊັບສິນ.

ມາດຕາ 14. ສິດ ແລະໜ້າທີ່ຂອງສານ

ໃນການພິຈາລະນາຕັດສິນການລົ້ມລະລາຍຂອງວິສາຫະກິດ ສານມີສິດ ແລະໜ້າທີ່ດັ່ງນີ້:

1. ລວບລວມເອກະສານຫລັກຖານເພື່ອພິຈາລະນາຕັດສິນການລົ້ມລະລາຍຂອງວິສາຫະກິດລູກໜີ້;

2. ຕິດຕາມແລະກວດກາການເຄື່ອນໄຫວຂອງຜູ້ຄວບຄຸມຊັບສິນ;

3. ກໍານົດມາດຕະການຊົ່ວຄາວໃນກໍລະນີຈໍາເປັນເພື່ອຮັບປະກັນຄວາມປອດໄພຂອງວິສາຫະ

ກິດລູກໜີ້;

4. ຄວບຄຸມກອງປະຊຸມເຈົ້າໜີ້;

5. ຕົກລົງໂຈະ ຫຼືຍົກເລີກການພິຈາລະນາຕັດສິນການລົ້ມລະລາຍຂອງວິສາຫະກິດລູກໜີ້;

6. ປະກາດໃຫ້ວິສາຫະກິດລູກໜີ້ລົ້ມລະລາຍ.

ມາດຕາ 15. ຄະນະຄວບຄຸມຊັບສິນ

ຄະນະຄວບຄຸມຊັບສິນ ປະກອບດ້ວຍ:

1. ພະນັກງານວິຊາການຂອງສານແຂວງຫລືກຳແພງນະຄອນໜຶ່ງທ່ານ ເປັນຫົວໜ້າ;

2. ຕົວແທນເຈົ້າໜີ້;

3. ຜູ້ຕາງໜ້າຂອງວິສາຫະກິດລູກໜີ້;

4. ຕົວແທນກຳມະບານ ແຂວງ ຫລືກຳແພງນະຄອນ;

5. ຕົວແທນກຳມະກອນຂອງວິສາຫະກິດລູກໜີ້;

6. ພະນັກງານວິຊາການຂອງອົງການການເງິນ.

ມາດຕ 16. ການຄວບຄຸມຊັບສິນ

ພາຍຫລັງທີ່ສານໄດ້ຕົກລົງໃຫ້ມີການຄວບຄຸມຊັບສິນຂອງວິສາຫະກິດລູກໜີ້ ທີ່ຖືກຟ້ອງ ວິສາຫະກິດດັ່ງກ່າວ ຍັງໃຫ້ສືບຕໍ່ດຳເນີນກິດຈະການ ແຕ່ຕ້ອງຢູ່ພາຍໃຕ້ການຕິດຕາມກວດກາຂອງສານ ແລະຄະນະຄວບຄຸມຊັບສິນ, ຫ້າມຊຸກເຊື່ອງ ຫລືເຄື່ອນຍ້າຍຊັບສິນ, ຫ້າມຂາຍ ຫລືໂອນຊັບສິນໄປທາງອື່ນ. ບັນດາຜູ້ປະກອບທຶນຂອງວິສາຫະກິດທີ່ຖືກຟ້ອງນັ້ນຕ້ອງໄດ້ຖອກຮຸ້ນທີ່ຄ້າງຖອກທັງໝົດພາຍໃນກຳນົດ 15 ວັນ ນັບແຕ່ວັນໄດ້ຮັບແຈ້ງການກ່ຽວກັບການຄວບຄຸມຊັບສິນຂອງສານເປັນຕົ້ນໄປ.

ມາດຕາ 17. ຊັບສິນທີ່ຖືກຄວບຄຸມເພື່ອໃຊ້ໜີ້

ຊັບສິນຂອງວິສາຫະກິດທີ່ຖືກຄວບຄຸມເພື່ອໃຊ້ໜີ້ລວມມີຊັບສິນທັງໝົດທີ່ເປັນກຳມະສິດຂອງວິສາຫະກິດ ຫລື ຂຶ້ນກັບການຄຸ້ມຄອງຂອງວິສາຫະກິດ ຊຶ່ງລວມມີ:

1. ຊັບສິນຄົງທີ່ ແລະ ເຄື່ອນທີ່ຂອງວິສາຫະກິດ ລວມທັງຊັບສິນທີ່ໃຫ້ເຊົ່າ ແລະໃຫ້ກູ້ຢືມ;

2. ເງິນສົດ ແລະ ຊັບສິນປະກອບທຶນ;

3. ໜີ້ຕ້ອງຮັບຂອງວິສາຫະກິດ.

ສຳຫລັບວິສາຫະກິດສ່ວນບຸກຄົນ ຫລືບໍລິສັດຮຸ້ນສ່ວນທີ່ຖືກພິຈາລະນາຕັດສິນໃຫ້ລົ້ມລະລາຍນັ້ນການຄວບຄຸມຊັບສິນເພື່ອໃຊ້ໜີ້ ຈະຖືກຍົກເວັ້ນເຄື່ອງໃຊ້ສອຍສ່ວນຕົວ ແລະອຸປະກອນການຜະລິດທີ່ຈຳເປັນ ແກ່ການປະກອບອາຊີບຂອງລູກໜີ້ ຊຶ່ງມີມູນຄ່າລວມທັງໝົດບໍ່ເກີນສອງແສນກີບ.

ມາດຕາ 18. ສິດ ແລະ ໜ້າທີ່ຂອງຄະນະຄວບຄຸມຊັບສິນ

ຄະນະຄວບຄຸມຊັບສິນ ມີສິດ ແລະ ໜາ້ທີ່ດັ່ງນີ້:

1. ເຮັດບັນຊີຈຳນວນຊັບສິນທັງຫມົດຂອງວິສາຫະກິດລູກຫນີ້;

2. ກວດກາ ແລະຄວບຄຸມຊັບສິນຂອງວິສາຫະກິດລູກຫນີ້. ໃນກໍລະນີຈຳເປັນ ກໍມີສິດສະເຫນີໃຫ້ສານຕົກລົງນຳໃຊ້ມາດຕະການອັນຈຳເປັນ ແລະຮີບດ່ວນຊົ່ວຄາວ ເພື່ອປົກປັກຮັກສາຊັບສິນຂອງວິສາຫະກິດລູກຫນີ້;

3. ເຮັດບັນຊີລາຍຊື່ເຈົ້າຫນີ້ ແລະຈຳນວນຫນີ້ທີ່ຕ້ອງສົ່ງໃຫ້ເຈົ້າຫນີ້;

4. ປະກາດແຈ້ງການ ກ່ຽວກັບການຄວບຄຸມຊັບສິນຂອງວິສາຫະກິດລູກຫນີ້ ໃຫ້ມວນຊົນຊາບພ້ອມທັງກຳນົດວັນ ເວລາ ໃຫ້ເຈົ້າຫນີ້ ອ້າງສິດທວງຫນີ້.

ຄະນະຄວບຄຸມຊັບສິນ ມີຫນ້າທີ່ຮັບຜິດຊອບ ຕໍ່ສານ ກ່ຽວກັບການປະຕິບັດຫນ້າທີ່ຂອງຕົນ.

ການໃຊ້ຈ່າຍທີ່ຈຳເປັນໃນການເຄື່ອນໄຫວຄວບຄຸມຊັບສິນເປັນພາລະຂອງວິສາຫະກິດລູກຫນີ້.

## ມາດຕາ 19. ກອງປະຊຸມເຈົ້າຫນີ້

ຜູ້ເຂົ້າຮ່ວມກອງປະຊຸມເຈົ້າຫນີ້ ປະກອບດ້ວຍ:

1. ເຈົ້າຫນີ້ທີ່ມີຢູ່ໃນບັນຊີລາຍຊື່ ຫລືຜູ້ຕາງຫນ້າເຈົ້າຫນີ້;

2. ຜູ້ຕາງຫນ້າຂອງວິສາຫະກິດລູກຫນີ້;

3. ຕົວແທນຂອງອົງການຈັດຕັ້ງກຳມະບານແຂວງ ຫລືກຳແພງນະຄອນ;

4. ຕົວແທນກຳມະກອນຂອງວິສາຫະກິດລູກຫນີ້.

## ມາດຕາ 20. ການຮຽກໂຮມກອງປະຊຸມເຈົ້າຫນີ້

ກອງປະຊຸມເຈົ້າຫນີ້ ຮຽກໂຮມໂດຍຄະນະຄວບຄຸມຊັບສິນ ຫລື ຕາມການສະເຫນີຂອງເຈົ້າຫນີ້ຊຶ່ງຕາງຫນ້າໃຫ້ 1/4 ຂອງຈຳນວນຫນີ້ທັງຫມົດ.

ຫມາຍນັດ ພ້ອມດ້ວຍລາຍການຂອງກອງປະຊຸມ ຕ້ອງໄດ້ສົ່ງໃຫ້ຜູ້ທີ່ຈະເຂົ້າຮ່ວມກອງປະຊຸມຢ່າງຊ້າສາມວັນ ກ່ອນວັນເປີດປະຊຸມ.

ກອງປະຊຸມເຈົ້າຫນີ້ ຈະເປີດຂຶ້ນໄດ້ກໍຕໍ່ເມື່ອມີເຈົ້າຫນີ້ເຂົ້າຮ່ວມກອງປະຊຸມ ຫລາຍກ່ວາເຄິ່ງຫນຶ່ງ ຊຶ່ງຕາງຫນ້າໃຫ້ຢ່າງຫນ້ອຍ 2/3 ຂອງຈຳນວນຫນີ້ທັງຫມົດ.

## ມາດຕາ 21. ສິດ ແລະຫນ້າທີ່ຂອງກອງປະຊຸມເຈົ້າຫນີ້

ກອງປະຊຸມເຈົ້າຫນີ້ ມີສິດ ແລະຫນ້າທີ່ດັ່ງນີ້:

1. ພິຈາລະນາຜ່ານແຜນການຟື້ນຟູວິສາຫະກິດຄືນໃຫມ່ ແລະການຈັດຕັ້ງດຳເນີນທຸລະກິດ;

2. ຄົ້ນຄ້ວາແລະນຳສະເຫນີຄຳຄິດຄຳເຫັນຕໍ່ສານກ່ຽວກັບການແບ່ງປັນຊັບສິນຂອງວິສາຫະກິດ ໃນກໍລະນີທີ່ແຜນການຟື້ນຟູວິສາຫະກິດຫາກບໍ່ໄດ້ຮັບການເຫັນດີ.

## ມາດຕາ 22. ການໂຈະກອງປະຊຸມເຈົ້າຫນີ້

ກອງປະຊຸມເຈົ້າຫນີ້ຈະຖືກໂຈະໃນກໍລະນີດັ່ງນີ້:

1. ເຈົ້າໜີ້ ທີ່ເຂົ້າຮ່ວມກອງປະຊຸມ ຫາກບໍ່ກາຍເຄິ່ງໜຶ່ງຂອງຈຳນວນເຈົ້າໜີ້ທັງໝົດ ແລະ ບໍ່ໄດ້ຕາງໜ້າໃຫ້ 2/3 ຂອງຈຳນວນໜີ້ທັງໝົດ;

2. ສຽງສ່ວນຫລາຍຂອງເຈົ້າໜີ້ ຊຶ່ງຕາງໜ້າໃຫ້ຢ່າງໜ້ອຍ 2/3 ຂອງຈຳນວນໜີ້ຂອງເຈົ້າໜີ້ທີ່ເຂົ້າຮ່ວມກອງປະຊຸມ ໄດ້ລົງມະຕິໃຫ້ໂຈະກອງປະຊຸມ.

ມາດຕາ 23. ພັນທະຂອງວິສາຫະກິດລູກໜີ້ຕໍ່ກອງປະຊຸມເຈົ້າໜີ້

ໃນກອງປະຊຸມເຈົ້າໜີ້, ເຈົ້າຂອງວິສາຫະກິດ ຫລືຜູ້ຕາງໜ້າຂອງວິສາຫະກິດມີໜ້າທີ່ອະທິບາຍແຜນການໄກ່ເກ່ຍ ແລະວິທີການຕ່າງໆ ໃນການຈັດຕັ້ງ ແລະເຄື່ອນໄຫວທຸລະກິດຄືນໃໝ່ຂອງວິສາຫະກິດ, ໃຫ້ຄຳກະຈ່າງແຈ້ງຕໍ່ບັນຫາຕ່າງໆ ທີ່ໄດ້ຍົກຂຶ້ນໃນກອງປະຊຸມເຈົ້າໜີ້. ໃນກໍລະນີເຈົ້າຂອງວິສາຫະກິດ ຫລື ຜູ້ຕາງໜ້າຂອງວິສາຫະກິດຫາກບໍ່ສາມາດເຂົ້າຮ່ວມກອງປະຊຸມ ໂດຍມີເຫດຜົນນັ້ນກໍຕ້ອງມອບສິດ ໃຫ້ຜູ້ໃດຜູ້ໜຶ່ງເຂົ້າຮ່ວມກອງປະຊຸມແທນ ຜູ້ທີ່ໄດ້ຮັບມອບສິດໃຫ້ເຂົ້າຮ່ວມກອງປະຊຸມແທນນັ້ນກໍມີສິດ ແລະ ໜ້າທີ່ຄືກັນກັບເຈົ້າຂອງຫລືຜູ້ຕາງໜ້າຂອງວິສາຫະກິດ. ໃນກໍລະນີທີ່ເຈົ້າຂອງວິສາຫະກິດສ່ວນບຸກຄົນຫາກເສຍຊີວິດຜູ້ສືບທອດເຈົ້າຂອງວິສາຫະກິດນັ້ນເປັນຜູ້ເຂົ້າຮ່ວມກອງປະຊຸມແທນ.

ມາດຕາ 24. ຮູບການຕົກລົງຂອງກອງປະຊຸມເຈົ້າໜີ້

ກອງປະຊຸມເຈົ້າໜີ້ ຈະຕົກລົງສະເໜີໃຫ້ສານພິຈາລະນາໜຶ່ງໃນສາມຮູບການດັ່ງຕໍ່ໄປນີ້ :

1. ການຟື້ນຟູວິສາຫະກິດຄືນໃໝ່;

2. ການຂາຍກິດຈະການ;

3. ການລົ້ມລະລາຍແລະການຊຳລະສະສາງ.

ມາດຕາ 25. ມະຕິຂອງກອງປະຊຸມເຈົ້າໜີ້

ມະຕິຂອງກອງປະຊຸມເຈົ້າໜີ້ ຈະມີຜົນສັກສິດໄດ້ກໍຕໍ່ເມື່ອໄດ້ຮັບຄະແນນສຽງຂອງເຈົ້າໜີ້ຊຶ່ງຕາງໜ້າໃຫ້ຢ່າງໜ້ອຍ 2/3 ຂອງຈຳນວນໜີ້ທັງໝົດ.

## ໝວດທີ IV
## ການຟື້ນຟູວິສາຫະກິດຄືນໃໝ່

ມາດຕາ 26. ພັນທະຂອງເຈົ້າຂອງ ຫລືຜູ້ຕາງໜ້າວິສາຫະກິດ

ເຈົ້າຂອງ ຫລືຜູ້ຕາງໜ້າຂອງວິສາຫະກິດເປັນຜູ້ຮັບຜິດຊອບໃນການຈັດຕັ້ງປະຕິບັດແຜນການຟື້ນຟູວິສາຫະກິດຄືນໃໝ່ຕາມທີ່ສານໄດ້ຕົກລົງ.

ມາດຕາ 27. ສິດ ແລະໜ້າທີ່ຂອງເຈົ້າໜີ້

ເຈົ້າໜີ້ມີສິດ ແລະໜ້າທີ່ ປະຕິບັດຕາມຄຳຕັດສິນຂອງສານ ແລະ ຕິດຕາມການປະຕິບັດ

ແຜນການຟື້ນຟູວິສາຫະກິດຄືນໃຫມ່ຂອງວິສາຫະກິດລູກຫນີ້.

ມາດຕາ 28. ການໂອນຊັບສິນ

ຊັບສິນທີ່ຈຳເປັນສຳລັບການສືບຕໍ່ການດຳເນີນທຸລະກິດຂອງວິສາຫະກິດລູກຫນີ້ນັ້ນ ຫ້າມຂາຍ, ຫ້າມໂອນ ຖ້າຫາກບໍ່ໄດ້ຮັບອະນຸຍາດຈາກສານ.

ມາດຕາ 29. ການປ່ຽນແປງກິດລະບຽບຂອງວິສາຫະກິດ

ກິດລະບຽບຂອງວິສາຫະກິດ ທີ່ຢູ່ໃນສະພາບຟື້ນຟູນັ້ນອາດຈະໄດ້ຮັບການປັບປຸງຄືນໃຫມ່ ເພື່ອໃຫ້ສອດຄ່ອງກັບແຜນການຟື້ນຟູດັ່ງກ່າວ.

ມາດຕາ 30. ການເພີ່ມທຶນ

ເພື່ອໃຫ້ສາມາດສືບຕໍ່ດຳເນີນທຸລະກິດຕາມແຜນການຟື້ນຟູໄດ້ ວິສາຫະກິດອາດມີຄວາມຈຳເປັນຕ້ອງໄດ້ເພີ່ມທຶນ.

ການເພີ່ມທຶນອາດຈະດຳເນີນດວ້ຍຮູບການດັ່ງຕໍ່ໄປນີ້ :

1. ການເພີ່ມມູນຄ່າຂອງຮຸ້ນ;
2. ການຫັນເອົາເຈົ້າຫນີ້ມາເປັນຜູ້ປະກອບທຶນ;
3. ການເພີ່ມຈຳນວນຮຸ້ນ;
4. ການກູ້ຢືມ.

ມາດຕາ 31. ກຳນົດເວລາຟື້ນຟູ

ກຳນົດເວລາຟື້ນຟູວິສາຫະກິດຄືນໃຫມ່ ບໍ່ໃຫ້ເກີນ 2 ປີ ນັບແຕ່ມື້ທີ່ສານໄດ້ຕົກລົງແຜນການຟື້ນຟູເປັນຕົ້ນໄປ.

ໃນໄລຍະເວລາດຳເນີນການຟື້ນຟູ ວິສາຫະກິດຕ້ອງໄດ້ໃຊ້ແທນຫນີ້ສິນຕາມແຜນການຟື້ນຟູນັ້ນ.

ມາດຕາ 32. ຄຳຕັດສິນຂອງສານ

ຜ່ານໄລຍະການຟື້ນຟູ ຖ້າວ່າວິສາຫະກິດຫາກສາມາດເຄື່ອນໄຫວທຸລະກິດຂອງຕົນຢ່າງມີປະສິດທິຜົນສານຈະຕັດສິນໃຫ້ດຳເນີນກິດຈະການຕໍ່ໄປ, ຖ້າວ່າວິສາຫະກິດ ຫາກບໍ່ສາມາດຟື້ນຕົວໄດ້ ສານກໍ ຈະຕັດສິນໃຫ້ວິສາຫະກິດນັ້ນລົ້ມລະລາຍ.

ໃນໄລຍະດຳເນີນການຟື້ນຟູວິສາຫະກິດຄືນໃຫມ່ຢູ່ນັ້ນ ສານສາມາດຕັດສິນໃຫ້ວິສາຫະກິດລົ້ມລະ ລາຍເວລາໃດກໍໄດ້ ຖ້າຫາກເຫັນວ່າວິສາຫະກິດນັ້ນ ຈະບໍ່ສາມາດຟື້ນຕົວໄດ້.

## ໝວດທີ V
## ການຂາຍກິດຈະການ

ມາດຕາ 33. ການຂາຍກິດຈະການ

ນັບແຕ່ມື້ທີ່ສານໄດ້ຕົກລົງໃຫ້ຄວບຄຸມຊັບສິນຂອງວິສາຫະກິດລູກໜີ້ ເປັນຕົ້ນໄປ ບຸກຄົນ ຫລື ນິຕິ ບຸກຄົນ ສາມາດສະເໜີຂໍຊື້ກິດຈະການຂອງວິສາຫະກິດທັງໝົດ ຫລືສ່ວນໃດສ່ວນໜຶ່ງກໍໄດ້.

ໃນກໍລະນີຂໍຊື້ກິດຈະການສ່ວນໃດສ່ວນໜຶ່ງນັ້ນ ສານຕ້ອງໄດ້ກຳນົດຢ່າງຈະແຈ້ງຊັບສິນທີ່ຈະຕົກລົງໃຫ້ຊື້ຂາຍໄດ້.

ມາດຕາ 34. ເງື່ອນໄຂຂອງຜູ້ຊື້

ສານຕ້ອງໄດ້ຄົ້ນຄວ້າເລືອກເຟັ້ນເອົາຜູ້ທີ່ສາມາດຊຳລະຄ່າຊື້ກິດຈະການ ຕາມກຳນົດເວລາທີ່ສານໄດ້ວາງໄວ້. ຜູ້ຊື້ກິດຈະການສາມາດຂາຍ ຫລືໂອນຊັບສິນຂອງວິສາຫະກິດໃຫ້ຄົນອື່ນ ໄດ້ກໍຕໍ່ເມື່ອ ຫາກໄດ້ຊຳລະຄ່າຊື້ກິດຈະການນັ້ນໝົດແລ້ວ.

## ໝວດທີ VI
## ການລົ້ມລະລາຍ ແລະການຊຳລະສະສາງ

ມາດຕາ 35. ການຕັດສິນໃຫ້ວິສາຫະກິດລົ້ມລະລາຍ

ສານຈະຕັດສິນໃຫ້ວິສາຫະກິດລົ້ມລະລາຍໄດ້ ຖ້າຫາກເກີດມີກໍລະນີໃດກໍລະນີໜຶ່ງດັ່ງຕໍ່ໄປນີ້ :

1. ເຈົ້າຂອງ ຫລືຜູ້ຕາງໜ້າຂອງວິສາຫະກິດ ບໍ່ມີແຜນການຟື້ນຟູວິສາຫະກິດຄືນໃໝ່;

2. ເຈົ້າຂອງ ຫລືຜູ້ຕາງໜ້າວິສາຫະກິດ ບໍ່ສາມາດປະຕິບັດໄດ້ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 23 ຂອງກົດໝາຍສະບັບນີ້;

3. ກອງປະຊຸມເຈົ້າໜີ້ບໍ່ຮັບເອົາແຜນການຟື້ນຟູວິສາຫະກິດໃໝ່;

4. ສິ້ນສຸດກຳນົດເວລາການຟື້ນຟູວິສາຫະກິດໃໝ່ ແຕ່ການດຳເນີນທຸລະກິດຂອງວິສາຫະກິດກໍຍັງມີຜົນກຳໄລ ແລະເຈົ້າໜີ້ກໍ່ຮຽກຮ້ອງໃຫ້ພິຈາລະນາການລົ້ມລະລາຍ;

5. ວິສາຫະກິດ ໄດ້ລ່ວງລະເມີດຂໍ້ຕົກລົງຂອງສານຢ່າງຮ້າຍແຮງ ໃນໄລຍະດຳເນີນການຟື້ນຟູວິສາຫະກິດຄືນໃໝ່;

6. ເຈົ້າຂອງວິສາຫະກິດໄດ້ໂຕນໜີ ຫລືເສັຍຊີວິດ ແລະຜູ້ສືບທອດໄດ້ປະຕິເສດການສືບທອດ ຫລືວ່າບໍ່ມີຜູ້ສືບທອດ ໃນໄລຍະເວລາທີ່ພວມພິຈາລະນາຕັດສິນການລົ້ມລະລາຍຂອງວິສາຫະກິດ.

ມາດຕາ 36. ຄຳຕັດສິນຂອງສານ

ຄຳຕັດສິນຂອງສານໃຫ້ວິສາຫະກິດລົ້ມລະລາຍ ປະກອບດ້ວຍເນື້ອໃນສຳຄັນທີ່ຈຳເປັນດັ່ງລຸ່ມນີ້:

1. ຊື່ຂອງສານ, ຊື່ ແລະນາມສະກຸນຂອງຜູ້ພິພາກສາທີ່ພິຈາລະນາຕັດສິນການລົ້ມລະລາຍຂອງວິສາຫະກິດ;

2. ວັນທີ ແລະເລກທີ່ຂອງຄຳຮ້ອງຟ້ອງໃຫ້ພິຈາລະນາຕັດສິນການລົ້ມລະລາຍຂອງວິສາຫະກິດ;

3. ຊື່ ແລະເລກທະບຽນຂອງວິສາຫະກິດ ທີ່ຖືກຕັດສິນໃຫ້ລົ້ມລະລາຍ;

4. ວັນທີ່ຕັດສິນການລົ້ມລະລາຍຂອງວິສາຫະກິດ;

5. ເຫດຜົນການຕັດສິນການລົ້ມລະລາຍຂອງວິສາຫະກິດ;

6. ແຜນການແບ່ງປັນຊັບສິນຂອງວິສາຫະກິດ.

ມາດຕາ 37. ການອຸທອນຄຳຕັດສິນຂອງສານ

ເຈົ້າຫນີ້, ເຈົ້າຂອງວິສາຫະກິດ ຫລືຜູ້ຕາງຫນ້າ ມີສິດຂໍອຸທອນຄຳຕັດສິນຂອງສານກ່ຽວກັບການລົ້ມລະລາຍຂອງວິສາຫະກິດ ພາຍໃນກຳນົດ 15 ວັນ ນັບແຕ່ມື້ທີ່ໄດ້ຮັບຊາບຄຳຕັດສິນນັ້ນເປັນຕົ້ນໄປ.

ມາດຕາ 38. ການແຕ່ງຕັ້ງຄະນະຊຳລະສະສາງ

ສານເປັນຜູ້ຕົກລົງສ້າງຕັ້ງຄະນະຊຳລະສະສາງ ຊຶ່ງປະກອບດ້ວຍ :

1. ພະນັກງານປະຕິບັດຄຳຕັດສິນຂອງສານເປັນຫົວຫນ້າ;

2. ຜູ້ຕາງຫນ້າອົງການການເງິນ;

3. ຜູ້ຕາງຫນ້າທະນາຄານຂັ້ນແຂວງ ຫລືກຳແພງນະຄອນ;

4. ຕົວແທນເຈົ້າຫນີ້;

5. ຕົວແທນກຳມະບານແຂວງ ຫລືກຳແພງນະຄອນ;

6. ຕົວແທນກຳມະກອນຂອງວິສາຫະກິດລູກຫນີ້;

7. ຜູ້ຕາງຫນ້າວິສາຫະກິດລູກຫນີ້.

ມາດຕາ 39. ສິດ ແລະຫນ້າທີ່ຂອງຄະນະຊຳລະສະສາງ.

ຄະນະຊຳລະສະສາງມີສິດ ແລະຫນ້າທີ່ດັ່ງຕໍ່ໄປນີ້:

1. ກວດກາຊັບສິນ ແລະຫນີ້ສິນຂອງວິສາຫະກິດ;

2. ຮັບເອົາການມອບຊັບສິນ, ເອກະສານທີ່ກ່ຽວຂ້ອງອື່ນໆຈາກຄະນະຄວບຄຸມຊັບສິນ;

3. ລົບລ້າງສັນຍາຂອງວິສາຫະກິດທີ່ເຮັດຂຶ້ນ ໂດຍບໍ່ຖືກຕ້ອງ;

4. ຮັບໂຮມຊັບສິນຂອງວິສາຫະກິດ;

5. ປະມູນຂາຍຊັບສິນຂອງວິສາຫະກິດ;

6. ແບ່ງປັນຊັບສິນໃຫ້ເຈົ້າຫນີ້;

7. ແບ່ງປັນສ່ວນທີ່ເຫລືອຈາກການໃຊ້ໜີ້ສິນແລ້ວນັ້ນໃຫ້ເຈົ້າຂອງ ຫລືໃຫ້ຜູ້ປະກອບທຶນຂອງວິສາຫະກິດ.

ການໃຊ້ຈ່າຍທີ່ຈຳເປັນໃນການເຄື່ອນໄຫວຊຳລະສະສາງນັ້ນເປັນພາລະຂອງວິສາຫະກິດລູກໜີ້.

ມາດຕາ 40. ການລົບລ້າງສັນຍາ ຫລືເອກະສານທີ່ບໍ່ຖືກຕ້ອງ

ເພື່ອຮັບໂຮມເອົາຊັບສິນຂອງວິສາຫະກິດ ມາໃຊ້ແທນໜີ້ສິນໄດ້ຢ່າງມີປະສິດທິຜົນນັ້ນ ຄະນະຊຳລະສະສາງມີສິດ ແລະໜ້າທີ່ກວດກາ, ລົບລ້າງສັນຍາ ຫລືເອກະສານອື່ນໆ ທີ່ວິສາຫະກິດ ໄດ້ເຮັດຂຶ້ນໂດຍບໍ່ຖືກຕ້ອງ ກ່ອນການຕົກລົງຂອງສານໃຫ້ມີການຄວບຄຸມຊັບສິນຂອງວິສາຫະກິດລູກໜີ້ເຊັ່ນ:

1. ການຂາຍຊັບສິນຫລຸດລາຄາ;

2. ການຄ້ຳປະກັນໜີ້ເກົ່າ;

3. ການເຊັນສັນຍາ ຫລືການໂອນຊັບສິນໃຫ້ພີ່ນ້ອງ, ໝູ່ເພື່ອນ ຫລືການເອົາຊັບສິນຂອງວິສາຫະກິດໃຫ້ຜູ້ອື່ນນຳໃຊ້.

ມາດຕາ 41. ການຮັບໂຮມຊັບສິນຂອງວິສາຫະກິດລູກໜີ້

ຄະນະຊຳລະສະສາງຕ້ອງດຳເນີນການຮັບໂຮມຊັບສິນທັງໝົດຂອງວິສາຫະກິດລູກໜີ້ດັ່ງນີ້:

1. ຊັບສິນຂອງວິສາຫະກິດເຊັ່ນ: ທີ່ດິນ, ເຮືອນ, ສາງ, ໂຮງງານ, ພາຫະນະອຸປະກອນການຜະລິດ ແລະສິນຄ້າໃນສາງເປັນຕົ້ນ;

2. ໜີ້ທີ່ຕ້ອງຮັບຂອງວິສາຫະກິດທັງໝົດ.

ພາຍຫລັງທີ່ໄດ້ຮັບໂຮມຊັບສິນແລ້ວ ຄະນະຊຳລະສະສາງມີສິດ ແລະໜ້າທີ່ປະມູນຂາຍຊັບສິນດັ່ງກ່າວ.

ມາດຕາ 42. ພັນທະຂອງລູກໜີ້

ພາຍຫລັງທີ່ ສານໄດ້ຕັດສິນ ໃຫ້ວິສາຫະກິດລູກໜີ້ລົ້ມລະລາຍແລ້ວ ວິສາຫະກິດລູກໜີ້ມີພັນທະຮ່ວມມື ກັບຄະນະຊຳລະສະສາງ ໃນການຈັດຕັ້ງປະຕິບັດຄຳຕັດສິນຂອງສານ.

ລູກໜີ້ຈະອອກນອກເຂດອຳນາດສານ ຫລື ອອກນອກປະເທດ ໄດ້ກໍຕໍ່ເມື່ອລູກໜີ້ຫາກມີຄວາມຈຳເປັນແທ້, ມີການຄ້ຳປະກັນຢ່າງເໝາະສົມ ແລະໄດ້ຮັບອະນຸຍາດຈາກ ສານທີ່ໄດ້ຕັດສິນການລົ້ມລະລາຍ ຂອງວິສາຫະກິດນັ້ນ.

ໃນກໍລະນີທີ່ສານຫາກໄດ້ຮັບລາຍງານ ແລະເຫັນວ່າລູກໜີ້ ມີພຶດຕິກຳຈະລົບໜີອອກນອກເຂດອຳນາດຂອງສານ ຫລື ອອກນອກປະເທດ ສານມີສິດອອກຄຳສັ່ງກັກຕົວໄດ້.

ມາດຕາ 43. ປະກາດການລົ້ມລະລາຍ

ພາຍໃນກຳນົດ 10 ວັນ ນັບແຕ່ມື້ຄຳຕັດສິນຂອງສານ ກ່ຽວກັບການລົ້ມລະລາຍຂອງວິສາຫະ

ກິດ ໃຊ້ໄດ້ຢ່າງເດັດຂາດແລ້ວ ຜູ້ພິພາກສາຕ້ອງໄດ້ອອກປະກາດທາງສື່ສານມວນຊົນ ສາມມື້ຕິດຕໍ່ກັນກ່ອນ ກັບການລົ້ມລະລາຍຂອງວິສາຫະກິດ ພ້ອມກັນນັ້ນກໍຕ້ອງສົ່ງສຳເນົາຄຳຕັດສິນການລົ້ມລະລາຍຂອງວິສາຫະກິດນັ້ນໄປໃຫ້:

1. ຫ້ອງການປະຕິບັດຄຳຕັດສິນຂອງສານ;
2. ເຈົ້າໜີ້ ແລະ ເຈົ້າຂອງວິສາຫະກິດທີ່ຖືກຕັດສິນໃຫ້ລົ້ມລະລາຍ;
3. ອົງການ ການເງິນ ;
4. ອົງການກຳມະບານ;
5. ອົງການທີ່ຂຶ້ນທະບຽນສ້າງຕັ້ງວິສາຫະກິດ;
6. ອົງການທະນາຄານ;
7. ສະພາການຄ້າ ແລະອຸດສາຫະກຳ;
8. ອົງການຕຳຫລວດເສດຖະກິດ.

ມາດຕາ 44. ການແບ່ງປັນຊັບສິນໃຫ້ເຈົ້າໜີ້

ເມື່ອຄະນະຊຳລະສະສາງ ຮັບໂຮມຊັບສິນ, ໜີ້ຕ້ອງຮັບຂອງວິສາຫະກິດໄດ້ແລ້ວ ກໍຈະດຳເນີນການແບ່ງປັນຊັບສິນນັ້ນໃຫ້ແກ່ເຈົ້າໜີ້ ໂດຍປະຕິບັດຕາມລຳດັບບຸລິມະສິດດັ່ງຕໍ່ໄປນີ້:

1. ຄ່າແຮງງານຂອງກຳມະກອນ;
2. ໜີ້ສິນຕໍ່ລັດ;
3. ໜີ້ສິນທີ່ມີການຄ້ຳປະກັນ;
4. ໜີ້ສິນທີ່ບໍ່ມີການຄ້ຳປະກັນ.

ການໃຊ້ແທນໜີ້ສິນດັ່ງກ່າວ ແມ່ນໃຫ້ໃຊ້ແທນໜີ້ສິນ ທີ່ໄດ້ຮັບບຸລິມະສິດກ່ອນໃຫ້ຄົບຖ້ວນແລ້ວເຫລືອ ເທົ່າໃດ ຈຶ່ງໃຊ້ແທນໜີ້ສິນລຳດັບຕໍ່ໄປ.

ສຳລັບໜີ້ສິນທີ່ຢູ່ໃນລຳດັບດຽວກັນນັ້ນ ຖ້າຊັບສິນເພື່ອໃຊ້ແທນໜີ້ສິນຫາກບໍ່ພຽງພໍໃຫ້ໃຊ້ແທນຕາມ ສ່ວນຮ້ອຍຂອງມູນຄ່າແຕ່ລະໜີ້ສິນ.

ມາດຕາ 45. ການແບ່ງປັນຊັບສິນທີ່ເຫລືອ

ພາຍຫລັງການແບ່ງປັນຊັບສິນຂອງວິສາຫະກິດໃຫ້ເຈົ້າໜີ້ຄົບຖ້ວນແລ້ວ ຖ້າວ່າຊັບສິນນັ້ນຫາກຍັງເຫລືອຢູ່ ກໍໃຫ້ແບ່ງປັນແກ່ຜູ້ປະກອບທຶນ ຕາມວິທີແບ່ງປັນຜົນກຳໄລ ຫລືແບ່ງປັນໃຫ້ເຈົ້າຂອງວິສາຫະກິດ.

ມາດຕາ 46. ການກວດກາການຊຳລະສະສາງ

ນັບແຕ່ມື້ໄດ້ເລີ່ມຕົ້ນເຄື່ອນໄຫວວຽກງານຂອງຕົນ ຄະນະຊຳລະສະສາງ ຕ້ອງໄດ້ລາຍງານຢ່າງເປັນປົກກະຕິຕໍ່ສານ ທີ່ໄດ້ແຕ່ງຕັ້ງຕົນນັ້ນ,ລາຍງານໃຫ້ເຈົ້າໜີ້ ແລະເຈົ້າຂອງວິສາຫະກິດຊາບນຳ.

ເຈົ້າຫນີ້ ແລະ ເຈົ້າຂອງວິສາຫະກິດ ມີສິດຫ້ວງ ຫລືຮ້ອງຟ້ອງຕໍ່ສານ ກ່ຽວກັບການກະທໍາທີ່ບໍ່ຖືກຕ້ອງຂອງຄະນະຊໍາລະສະສາງ.

## ຫມວດທີ VII
## ມາດຕະການຕໍ່ຜູ້ກະທໍາຜິດ

ມາດຕາ 47. ການກະທໍາຜິດກ່ອນການຄວບຄຸມຊັບສິນ

ຖ້າຄະນະຄວບຄຸມຊັບສິນຫາກກວດກາເຫັນວ່າກ່ອນການຮ້ອງຟ້ອງໃຫ້ສານພິຈາລະນາຕັດສິນການ ລົ້ມລະລາຍຂອງວິສາຫະກິດ ຄະນະອໍານວຍການຂອງວິສາຫະກິດໄດ້ເຊື່ອງອໍາເອກະສານບັນຊີຂອງວິສາ ຫະກິດ, ເຊື່ອງອໍາຊັບສິນ, ຍົກຍ້າຍ, ໂອນຊັບສິນ ຫລືເພີ່ມຫນີ້ສິນໂດຍບໍ່ຖືກຕ້ອງ, ເຮັດສັນຍາຄໍ້າປະກັນໃຫ້ຫນີ້ສິນທີ່ບໍ່ມີການຄໍ້າປະກັນ, ລຶບລ້າງຫລືຫລຸດຜ່ອນສິດທວງຫນີ້ຕ້ອງຮັບຂອງວິສາຫະກິດ ຄະນະອໍານວຍການຂອງວິສາຫະກິດດັ່ງກ່າວຈະຖືກດໍາເນີນຄະດີຕາມກົດຫມາຍ.

ມາດຕາ 48. ການກະທໍາຜິດໃນໄລຍະຄວບຄຸມຊັບສິນ

ເມື່ອສານໄດ້ຕົກລົງໃຫ້ມີການຄວບຄຸມຊັບສິນຂອງວິສາຫະກິດລູກຫນີ້ແລ້ວ ຖ້າວ່າຄະນະຮັບຜິດຊອບວິສາຫະກິດນັ້ນຫາກຍັງຮັບສິນເຊື່ອໂດຍບໍ່ໄດ້ແຈ້ງໃຫ້ເຈົ້າຫນີ້ຊາບ ວ່າຕົນເອງໄດ້ຖືກຄວບຄຸມຊັບສິນ ຫລື ຖືກຟ້ອງໃຫ້ລົ້ມລະລາຍ ແລະຫາກຍັງດໍາເນີນທຸລະກິດຢູ່ ໂດຍອອກຊື່ອື່ນ ຫລືເອົາຊື່ຜູ້ອື່ນມາບັງຫນ້າຈະຖືກດໍາເນີນຄະດີຕາມກົດຫມາຍ.

ມາດຕາ 49. ການຫ້າມດໍາລົງຕໍາແຫນ່ງ

ປະທານ, ສະມາຊິກຂອງສະພາບໍລິຫານ ຫລືຄະນະອໍານວຍການຂອງວິສາຫະກິດທີ່ຖືກຕັດສິນໃຫ້ລົ້ມລະລາຍບໍ່ມີສິດດໍາລົງຕໍາແຫນ່ງເປັນປະທານ,ເປັນສະມາຊິກຂອງສະພາບໍລິຫານ ຫລືຄະນະອໍານວຍການຂອງວິສາຫະກິດອື່ນອີກ ບໍ່ວ່າຈະແມ່ນວິສາຫະກິດໃດກໍຕາມ ພາຍໃນກໍານົດສາມປີນັບແຕ່ມື້ທີ່ສານໄດ້ຕັດສິນໃຫ້ວິສາຫະກິດລົ້ມລະລາຍເປັນຕົ້ນໄປ ຍົກເວັ້ນສະມາຊິກສະພາບໍລິຫານຂອງລັດວິສາຫະກິດ ແລະ ວິສາຫະກິດທີ່ຮ້ອງຂໍໃຫ້ສານພິຈາລະນາຕັດສິນການລົ້ມລະລາຍຂອງວິສາຫະກິດຕົນດ້ວຍຄວາມສະຫມັກໃຈ ແລະສາມາດໃຊ້ແທນຫນີ້ສິນໄດ້ຢ່າງຄົບຖ້ວນ.

ມາດຕາ 50. ມາດຕະການຕໍ່ຄະນະຄວບຄຸມແລະຄະນະຊໍາລະສະສາງ

ຄະນະຄວບຄຸມ ຫລືຄະນະຊໍາລະສະສາງ ຫາກໄດ້ກະທໍາຜິດ ໃນໄລຍະເວລາ ທີ່ປະຕິບັດຫນ້າທີ່ ຂອງຕົນນັ້ນ ສານມີສິດປົດຜູ້ຄວບຄຸມ ຫລືຜູ້ຊໍາລະສະສາງຜູ້ໃດຜູ້ຫນຶ່ງ ຫລືທັງຫມົດກໍໄດ້ຖ້າເຫັນວ່າຜູ້ນັ້ນ ມີຄວາມຜິດພາດໃນການປະຕິບັດຫນ້າທີ່ວຽກງານຂອງຕົນ. ຫລັງຈາກນັ້ນສານຈະພິຈາລະນາຕັດສິນ ໃຫ້ຜູ້ກ່ຽວຮັບຜິດຊອບຕໍ່ຄວາມເສັຍຫາຍທີ່ເກີດຂຶ້ນແລ້ວ ແຕ່ງຕັ້ງຜູ້ໃຫມ່ ຫລືຄະນະໃຫມ່ແທນ.

ໃນກໍລະນີຜູ້ຄວບຄຸມ ຫລືຜູ້ຊໍາລະສະສາງ ຫາກໄດ້ກະທໍາຜິດຢ່າງຮ້າຍແຮງຈະຖືກດໍາເນີນຄະດີ

ຕາມກົດໝາຍ.

ມາດຕາ 51. ຜູ້ແອບອ້າງເປັນເຈົ້າໜີ້

ບຸກຄົນໃດອ້າງຕົນວ່າເປັນເຈົ້າໜີ້ຂອງວິສາຫະກິດທີ່ຖືກຟ້ອງໃຫ້ລົ້ມລະລາຍ ໂດຍບໍ່ມີມູນຄວາມຈິງ ຈະຖືກດຳເນີນຄະດີຕາມກົດໝາຍ.

## ໝວດທີ VIII
## ການປິດການຊຳລະສະສາງ ແລະ
## ການພົ້ນຈາກການເປັນຜູ້ລົ້ມລະລາຍ

ມາດຕາ 52. ການປິດການຊຳລະສະສາງ

ການຊຳລະສະສາງໜີ້ສິນຂອງວິສາຫະກິດທີ່ຖືກຕັດສິນໃຫ້ລົ້ມລະລາຍ ຈະຖືກປິດລົງໃນກໍລະນີໃດໜຶ່ງດັ່ງນີ້:

1. ສານສາມາດໄກ່ເກ່ຍໃຫ້ເຈົ້າໜີ້ ແລະລູກໜີ້ມີການປະນີປະນອມກັນໄດ້;

2. ຄະນະຊຳລະສະສາງໄດ້ສິ້ນສຸດການແບ່ງປັນຊັບສິນໃຫ້ເຈົ້າໜີ້ຈົນຄົບ ຫລືລູກໜີ້ບໍ່ມີຊັບສິນ ຈະແບ່ງປັນອີກ.

ພາຍຫລັງທີ່ໄດ້ປິດການຊຳລະສະສາງແລ້ວ ສານຕ້ອງແຈ້ງໃຫ້ອົງການຂື້ນທະບຽນວິສາຫະກິດ ເພື່ອລຶບຊື່ວິສາຫະກິດທີ່ຖືກຕັດສິນໃຫ້ລົ້ມລະລາຍນັ້ນອອກຈາກບັນຊີປື້ມທະບຽນວິສາຫະກິດ ແລະອອກປະກາດ ທາງສື່ມວນຊົນ.

ມາດຕາ 53. ການຂໍໃຫ້ເປີດການຊຳລະສະສາງຄືນໃໝ່

ເຈົ້າໜີ້ ຫລືລູກໜີ້ມີສິດຮ້ອງຂໍໃຫ້ສານພິຈາລະນາຄືນ ກ່ຽວກັບການປິດການຊຳລະສະສາງຂອງວິສາຫະກິດທີ່ຖືກລົ້ມລະລາຍພາຍໃນກຳນົດ 15 ວັນ ນັບແຕ່ມື້ທີ່ສານໄດ້ປະກາດປິດການຊຳລະສະສາງເປັນຕົ້ນໄປ. ຖ້າສານຫາກເຫັນວ່າມີເຫດຜົນພຽງພໍ ກໍຈະພິຈາລະນາເປີດການຊຳລະສະສາງຄືນໃໝ່.

ມາດຕາ 54. ການພົ້ນຈາກການເປັນຜູ້ລົ້ມລະລາຍ

ສານຈະຕັດສິນໃຫ້ເຈົ້າຂອງວິສາຫະກິດ ທີ່ຖືກປະກາດລົ້ມລະລາຍນັ້ນ ພົ້ນຈາກການເປັນຜູ້ລົ້ມລະລາຍໄດ້ກໍຕໍ່ເມື່ອສານຫາກໄດ້ຮັບຄຳຮ້ອງຂໍຂອງຜູ້ກ່ຽວໂດຍມີເອກະສານ ຢັ້ງຢືນວ່າໄດ້ປະຕິບັດການຊຳລະສະສາງສຳເລັດ ແລະໄດ້ສິ້ນສຸດການປະຕິບັດໂທດແລ້ວ.

## ໝວດທີ IX
## ບົດບັນຍັດສຸດທ້າຍ

ມາດຕາ 55. ການຈັດຕັ້ງປະຕິບັດ

ລັດຖະບານ ແຫ່ງສາທາລະນະລັດປະຊາທິປະໄຕປະຊາຊົນລາວ ເປັນຜູ້ອອກຂໍ້ກຳນົດເພື່ອຈັດຕັ້ງ ປະຕິບັດກົດຫມາຍສະບັບນີ້.

ມາດຕາ 56. ຜົນສັກສິດ

ກົດຫມາຍສະບັບນີ້ມີຜົນສັກສິດພາຍຫລັງ ສາມສິບວັນ ນັບແຕ່ມື້ປະທານປະເທດ ແຫ່ງສາທາລະນະລັດ ປະຊາທິປະໄຕປະຊາຊົນລາວ ໄດ້ອອກລັດຖະດຳລັດ ປະກາດໃຊ້ເປັນຕົ້ນໄປ.

ວຽງຈັນ, ວັນທີ 14 ຕຸລາ 1994

ປະທານສະພາແຫ່ງຊາດ